**12. ບໍລິສັດຈັດລຳດັບຄວາມໜ້າເຊື່ອຖື ແມ່ນຫຍັງ?**

ບໍລິສັດຈັດລຳດັບຄວາມໜ້າເຊື່ອຖື ແມ່ນໜຶ່ງໃນສະຖາບັນສື່ກາງດ້ານຫຼັກຊັບ ທີ່ເຄື່ອນໄຫວໃຫ້ບໍລິການຈັດລຳດັບຄວາມໜ້າເຊື່ອຖື ແກ່ກຸ່ມເປົ້າໝາຍທີ່ຕິດພັນກັບວຽກງານຫຼັກຊັບ ເປັນຕົ້ນແມ່ນ ບໍລິສັດເປົ້າໝາຍອອກຈຳໜ່າຍຫຼັກຊັບ, ບໍລິສັດອອກຈຳໜ່າຍຫຼັກຊັບ, ບໍລິສັດຈົດທະບຽນ, ສະຖາບັນສື່ກາງດ້ານຫຼັກຊັບ ແລະ ພາກສ່ວນກ່ຽວຂ້ອງໃນຂົງເຂດວຽກງານຫຼັກຊັບ.

ບໍລິສັດຈັດລຳດັບຄວາມໜ້າເຊື່ອຖືທີ່ດຳເນີນການເຄື່ອນໄຫວທຸລະກິດດ້ານຫຼັກຊັບ ສາມາດໃຫ້ບໍລິການຈັດລຳດັບຄວາມໜ້າເຊື່ອຖືແກ່ກຸ່ມເປົ້າໝາຍໄດ້ ຄື: ຈັດລຳດັບຄຸນນະພາບ ແລະ ຄວາມສ່ຽງຂອງຫຼັກຊັບ, ຈັດລຳດັບການຄຸ້ມຄອງບໍລິຫານ ແລະ ຈັດລຳດັບຖານະການເງິນ.

ປະຈຸບັນ ໃນ ສປປ ລາວ ຍັງບໍ່ທັນໄດ້ມີການສ້າງຕັ້ງ ບໍລິສັດຈັດລຳດັບຄວາມໜ້າເຊື່ອຖື. ແຕ່ອີງໃສ່ການພັດທະນາຢ່າງຕໍ່ເນື່ອງຂອງຕະຫຼາດທຶນລາວ, ເຊື່ອໝັ້ນວ່າໃນອານາຄົດອັນໃກ້ນີ້ ກໍ່ຈະມີການສ້າງຕັ້ງບໍລິສັດຈັດລຳດັບຄວາມໜ້າເຊື່ອຖືຂຶ້ນຄືກັບບັນດາປະເທດໃນພາກພື້ນ ກໍ່ຄື ສາກົນຢ່າງແນ່ນອນ.